ສະບັບປັບປຸງໃໝ່ ປີ 2005

# ຄຳແນະນຳເຣື່ອງ ການຮຽນຢູ່ບ່ອນເຮັດວຽກ ສຳລັບບັນດາພໍ່ແມ່ ແລະ ຜູ້ດູແລ

## ສຳລັບພວກນັກຮຽນໃນໂຮງຮຽນຣັຖບານ ແລະ ພວກນັກຮຽນທີ່ພວມຮຽນວິຊາສຳລັບເສັງເອົາ HSC ຢູ່ໃນ ສະຖາບັນ TAFE NSW.



ຄຳແນະນຳນີ້ຈະນຳພາໃຫ້ຮູ້ຈັກແນວທາງຂອງການຮຽນຢູ່ບ່ອນເຮັດວຽກວ່າມີຫຍັງກ່ຽວຂ້ອງແດ່ ແລະ ການອູ້ມຊູທີ່ມີໄວ້ໃຫ້ແກ່ບັນດາພໍ່ແມ່ ຜູ້ດູແລ ແລະ ນັກຮຽນ.

NEW SOUTH WALES DEPARTMENT OF EDUCATION AND TRAINING

LAOTIAN - Parents and Carers Guide to Workplace Learning

## ພາກ 1
## ກ່ຽວກັບ ການຮຽນຢູ່ບ່ອນເຮັດວຽກ

- ໂຄງການ ການຮຽນຢູ່ບ່ອນເຮັດວຽກທັງຫຼາຍແມ່ນສ່ວນນຶ່ງຂອງຫຼັກສູດການຮຽນຂັ້ນມັທຍົມໃນຣັຖ NSW.  ໂຄງການເຫຼົ່ານີ້ສນັບສນູນໃຫ້ພວກນັກຮຽນໃຊ້ເວລາທີ່ໄດ້ຖືກວາງແຜນໄວ້ແລ້ວ - ຕາມປົກກະຕິຈະແມ່ນນຶ່ງອາທິດ-ຢູ່ໃນບ່ອນເຮັດວຽກທີ່ພວກເຂົາເລືອກ ຊຶ່ງຈະເປັນການເພີ້ມພູນທີ່ມີຄ່າຕໍ່ການຮຽນຢູ່ໃນຫ້ອງຮຽນຂອງພວກເຂົາ.
- ການຮຽນຢູ່ບ່ອນເຮັດວຽກ ເໝາະສົມກັບນັກຮຽນໝົດທຸກຄົນທີ່ຢູ່ໃນໂຮງຮຽນຣັຖບານໃນຣັຖ NSW ແລະ ຕາມຄວາມສາມາດທຸກໆຂັ້ນ.

### ເປັນຫຍັງ ການຮຽນຢູ່ບ່ອນເຮັດວຽກ ຈຶ່ງເປັນສິ່ງສຳຄັນ?

ການຮຽນຢູ່ບ່ອນເຮັດວຽກຊ່ວຍພວກນັກຮຽນໃຫ້:

- ໄດ້ຄວາມຮູ້ໂດຍກົງຂອງການປ່ຽນແປງຂອງໂລກການເຮັດວຽກແລະທຸຣະກິດ
- ທົດລອງວຽກ ຫລື ຄວາມໃຝ່ຝັນໃນໜ້າທີ່ການງານຂອງພວກເຂົາ
- ສຳເຣັດການຮຽນໃນສະພາບແວດລ້ອມຂອງອຸດສາຫະກັມທີ່ເໝາະສົມ
- ໄດ້ປະສົບການໂດຍກົງຕາມທີ່ພວກນາຍຈ້າງຢາກໄດ້
- ໄດ້ຄວາມຊຳນານໃນການເຮັດວຽກທົ່ວໄປ ເຊັ່ນ ການເວົ້າລົມໃນບ່ອນເຮັດວຽກ ແລະ “ຄວາມ ຊຳນານດ້ານມະນຸດສັມພັນ” ແລະ/ຫຼື ຄວາມຊຳນານໃນອຸດສາຫະກັມສະເພາະ ເຊັ່ນ  ການຮຽນວິຊາຊີບແລະການຝຶກຫັດວິຊາຊີບ [vocational education and training (VET)]
- ມີຄວາມເຊື່ອໝັ້ນໃນຕົວເອງ ແລະ ຄວາມເປັນຜູ້ໃຫຍ່ເພີ້ມຂຶ້ນ ພ້ອມທັງມີຄວາມຮູ້ດ້ວຍຕົວເອງຫຼາຍຂຶ້ນດ້ວຍການຜ່ານການພົວພັນຢູ່ໃນສະພາບແວດລ້ອມຂອງການເຮັດວຽກຂອງຜູ້ໃຫຍ່
- ສຳຫລວດເບິ່ງຄວາມສັມພັນລະຫວ່າງ ການຮຽນຢູ່ໂຮງຮຽນ ການຝຶກຫັດຢູ່ TAFE NSW ຫຼື ຢູ່ຕາມອົງການຝຶກຫັດທີ່ລົງທະບຽນຂອງເອກກະຊົນ ຫຼື ຂອງຊຸມຊົນ [private or community registered training organisation (P/C RTO)]  ການຮຽນຢູ່ ມະຫາວິທຍາລັຍ ແລະ ການເຮັດວຽກແລະການຝຶກຫັດໃນອະນາຄົດ
- ຈັດການການປ່ຽນແປງຂອງພວກເຂົາໂດຍການຜ່ານ ແລະ ຈາກໂຮງຮຽນໄປສູ່ການຮຽນຕໍ່ ການຝຶກຫັດ ແລະ ວຽກງານ.

### ແມ່ນຫຍັງເປັນສິ່ງສຳຄັນສອງຢ່າງຂອງໂຄງການຮຽນຢູ່ບ່ອນເຮັດວຽກ?

#### Work Experience

- ພວກນັກຮຽນເຂົ້າຮ່ວມໃນການແນະນຳໃຫ້ຮູ້ຈັກກັບ “ໂລກຂອງການເຮັດວຽກ” ແບບທົ່ວໄປ ຕາມທັມມະດາແລ້ວແມ່ນຢູ່ໃນດ້ານທີ່ນັກຮຽນໄດ້ເລືອກເອົາ.  ພວກນັກຮຽນສາມາດສັງເກດເບິ່ງວຽກຫລາຍໆຢ່າງພ້ອມທັງເຮັດວຽກທີ່ເໝາະສົມຕາມຂັ້ນຄວາມຊຳນານຂອງພວກເຂົາໂດຍມີຜູ້ຄວບຄຸມນຳ.
- Work experience ສ້າງມາຈາກວຽກ, ອາຊີບ ແລະ ໂຄງການຮຽນທຸຣະກິດ ພ້ອມທັງວຽກ ການຮຽນອື່ນໆ ແລະ ກິຈກັມການວາງແຜນອາຊີບຂອງໂຮງຮຽນ.
- ຕາມປົກກະຕິແລ້ວ ໂຄງການເຫຼົ່ານີ້ຈະໃຫ້ເຮັດຢູ່ໃນປີ 9 ຫຼື ປີ10.   ອາດຈະມີໂອກາດເພີ້ມໃຫ້ໃນ ປີ11 ແລະ ປີ12 ອີກນຳ.

#### Work Placement

- Work placement ພົວພັນກັບນັກຮຽນຢູ່ປີ11 ແລະ ປີ12 ຊຶ່ງພວມຮຽນວິຊາທີ່ອຸດສາຫະກັມຮັບຮູ້ໂດຍເປັນສ່ວນນຶ່ງຂອງວິຊາຮຽນສຳລັບ ປະກາສນີຍາບັດມັທຍົມຕອນປາຍ [Higher School Certificate (HSC)] ຮວມເຖິງ ວິຊາ ບໍຣິການທຸຣະກິດ ການກໍ່ສ້າງ ການບັນເທິງ ການຮັບຮອງແຂກ  ຂໍ້ມູນເທັກໂນໂລຈີ  ໂລຫະແລະວິສວະກັມ ອຸດສາຫະກັມຂັ້ນຕົ້ນ ການຄ້າຂາຍ ແລະ ການທ່ອງທ່ຽວ.
- ການຮຽນວິຊາຊີບເຫລົ່ານີ້ອາດຈະຖືກສອນໂດຍທາງໂຮງຮຽນ ຫຼື ສະຖາບັນTAFE NSW ຫຼື ບາງຢ່າງກໍຈະແມ່ນໂດຍ ອົງການຝຶກຫັດທີ່ລົງທະບຽນຂອງເອກກະຊົນ ຫຼື ຂອງຊຸມຊົນ [private or community registered training organisation (P/C RTO)]  ຫຼື ຍັງເປັນທີ່ຮູ້ກັນວ່າ “ຜູ້ບໍຣິການເອກກະຊົນ” ຊຶ່ງທາງໂຮງຮຽນຈ້າງເໝົາໃຫ້ສອນວິຊາສະເພາະກ່ຽວກັບອຸດສາຫະກັມໃຫ້ແກ່ນັກຮຽນ.
- Work placement ເປັນ **ຂໍ້ກຳນົດທີ່ບັງຄັບອັນນຶ່ງຂອງHSC** ສຳລັບວິຊາຕ່າງໆທີ່ກ່າວມາຢູ່ຂ້າງເທິງນີ້. ໃນ ລະຍະເວລາເຮັດ work placement ນັ້ນ ນາຍຈ້າງທີ່ເປັນເຈົ້າພາບ ຈະຄວບຄຸມເບິ່ງນັກຮຽນໃນຖານະທີ່ເຂົາເຈົ້າເປັນຜູ້ເຮັດວຽກອາສາສມັກຢູ່ໃນບ່ອນເຮັດວຽກຂອງນາຍຈ້າງ, ຝຶກຫັດ ແລະ ຂຍາຍຄວາມຊຳນານສະເພາະໃນດ້ານອຸດສາຫະກັມທີ່ນັກຮຽນໄດ້ຮຽນມາຈາກການຝຶກຫັດວຽກຢູ່ທີ່ໂຮງຮຽນ, TAFE NSW ຫຼື ຢູ່, TAFE NSW ຫຼື ຢູ່ P/C RTO.
- ພວກນາຍຄູໃຊ້ Work placement ເພື່ອເກັບກຳເອົາຫຼັກຖານຂອງຄວາມສຳເຣັດຂອງຄວາມສາມາດຕາມມາຕຖານຂອງອຸດສາຫະກັມຂອງນັກຮຽນ. ການວັດມາຕຖານນີ້ອາດເຮັດໂດຍການຮ່ວມມືກັບຜູ້ປະເມີນບ່ອນເຮັດວຽກທີ່ມີຄຸນວຸດທິທີ່ເໝາະສົມ.
- ຄວາມສາມາດຂອງນັກຮຽນນຳໄປສູ່ຄຸນວຸດທິ VET ດ້ານອຸດສາຫະກັມສະເພາະ ຊຶ່ງຖືກຮັບຮູ້ທົ່ວອອັສເຕຣເລັຍ.

### ມີໂຄງການຮຽນຢູ່ບ່ອນເຮັດວຽກແບບອື່ນບໍ?

- ມີ. ໂຄງການເຫຼົ່ານີ້ຮວມເຖິງໂຄງການຮຽນດ້ານວິສາຫະກິດ ຮຽນດ້ານຊຸມຊົນ ແລະ ໂຄງການ ຄວບຄຸມເບິ່ງນັກຮຽນ ຊຶ່ງດຳເນີນການໂດຍພວກນາຍຈ້າງຢູ່ໃນບ່ອນເຮັດວຽກ.

ຖ້າທ່ານມີຄວາມລຳບາກໃນການເຂົ້າໃຈເອກກະສານນີ້ ຫຼື ທ່ານຕ້ອງການຂໍ້ມູນເພີ້ມຕື່ມ ກະຣຸນາໂທຣະສັບຫາ ບໍຣິການນາຍພາສາທາງໂທຣະສັບ ຕາມເບີ 131 450 ຂໍເອີ້ນນາຍພາສາທີ່ປາກພາສາລາວ ແລ້ວຂໍໃຫ້ເຂົາໂທຣະສັບໄປຫາໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫລື P/C RTO ໃຫ້ທ່ານ. ບໍຣິການນີ້ຈະເປັນບໍຣິການຟຣີສຳລັບທ່ານ.

## ພາກ 2
## ການຮຽນຢູ່ບ່ອນເຮັດວຽກຈະເຮັດແບບໃດ?

- ໂຄງການຮຽນຢູ່ບ່ອນເຮັດວຽກຖືກຈັດຂຶ້ນແລະໄດ້ຮັບອະນຸຍາດຈາກທາງໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນTAFE NSW ຫຼື ບໍຣິການທີ່ຖືກຮັບເໝົາ P/C RTO.
- ນັກຮຽນສ່ວນຫຼາຍຈະມີໂອກາດເຂົ້າຮ່ວມໃນໂຄງການການຮຽນຢູ່ບ່ອນເຮັດວຽກໃນຕອນໃດຕອນນຶ່ງພາຍໃນລະຍະທີ່ຮຽນຢູ່ໂຮງຮຽນມັທຍົມ.
- ບ່ອນຮຽນໄດ້ຖືກຈັດໃຫ້ສຳລັບພວກນັກຮຽນໂດຍອີງໃສ່ວິຊາທີ່ພວກເຂົາຮຽນ ໜ້າທີ່ການງານທີ່ພວກເຂົາວາງແຜນໄວ້ ຫຼື ການຮຽນອື່ນໆ.
- ພວກນັກຮຽນເຂົ້າຮ່ວມໃນກິຈກັມຕ່າງໆທີ່ນາຍຄູໄດ້ຈັດໄວ້ກ່ອນທີ່ພວກເຂົາຈະໄດ້ບ່ອນຮຽນ ເພື່ອວ່າພວກນັກຮຽນຈະໄດ້ກຽມຕົວຢ່າງເຕັມທີ່ສຳລັບເອົາປະສົບການ.
- ພວກນັກຮຽນຈະຖືກຄວບຄຸມໂດຍນາຍຈ້າງ ຫຼື ຜູ້ຄວບຄຸມທີ່ໄດ້ຖືກແຕ່ງຕັ້ງຢູ່ໃນບ່ອນເຮັດວຽກ. ໜ້າທີ່ຂອງພວກເຂົາກໍຄືໃຫ້ແນ່ໃຈວ່ານັກຮຽນໄດ້ກິຈກັມອັນເໝາະສົມເພື່ອກະຕຸ້ນຄວາມສົນໃຈ ແລະ ທ້າທາຍພວກເຂົາ.
- ໂຮງຮຽນຂອງທ່ານ ສະຖາບັນ TAFE NSW ຫລື P/C RTO ກໍມີໜ້າທີ່ສືບຕໍ່ການເບິ່ງແຍງ ນັກຮຽນທີ່ຢູ່ໃນບ່ອນເຮັດວຽກອີກນຳ. ນາຍຄູຈະໄປຢ້ຽມຢາມ ຫຼື ຈະໂທຣະ ສັບໄປຫານາຍຈ້າງ ຫຼື ຜູ້ຄວບຄຸມຢູ່ບ່ອນເຮັດວຽກ ແລະ ນັກຮຽນເອງ ເພື່ອກວດເບິ່ງຄວາມກ້າວໜ້າ ແລະ ສວັດດີການຂອງນັກຮຽນ. ນອກຈາກນັ້ນ ກໍຍັງຈະຕ້ອງມີການຕິດຕາມເບິ່ງນັກຮຽນຫຼັງຈາກການເຮັດວຽກເອົາປະສົບການແລ້ວນຳອີກ.

### ນັກຮຽນຈະໄດ້ບ່ອນຮຽນໄດ້ຢ່າງໃດ?

ຕໍ່ລົງໄປນີ້ແມ່ນວິທີການບາງຢ່າງ ທີ່ຈະສົມທຽບນັກຮຽນໃສ່ກັບບ່ອນຮຽນເຮັດວຽກ.

- ໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO ໄດ້ຮັບບ່ອນວ່າງຢູ່ບ່ອນເຮັດວຽກ ແລ້ວກໍຈະຈັດໃຫ້ແກ່ນັກຮຽນ ໂດຍອີງໃສ່ຕາມຂໍ້ກຳນົດຂອງນາຍຈ້າງ ແລະ ຕາມ ຄວາມສົນໃຈ ຄວາມຕ້ອງການ ແລະ ແຜນໜ້າທີ່ວຽກງານທີ່ນັກຮຽນໄດ້ວາງໄວ້.
- HSC VET **work placements** ທີ່ມີຂໍ້ບັງຄັບໄດ້ມາຈາກຊຸມຊົນທີ່ເປັນຫຸ້ນສ່ວນໃນທ້ອງຖິ່ນ [Local Community Partnership (LCPs)] ຊຶ່ງຖືກແຕ່ງຕັ້ງຂຶ້ນເພື່ອເບິ່ງແຍງບ່ອນຮຽນວຽກເຫຼົ່ານີ້. ນາຍຄູຈະສົມທຽບນັກຮຽນໃສ່ກັບບ່ອນຮຽນອັນມີຄຸນນະພາບທີ່ທາງ LCP ສເນີມາໃຫ້.
- ພວກນັກຮຽນຊອກຫາບ່ອນເຮັດ **work experience** ຂອງພວກເຂົາດ້ວຍຕົວເອງດ້ວຍການອູ້ມຊູຈາກທາງໂຮງຮຽນ ແລະ ພໍ່ແມ່ຫຼືຜູ້ດູແລຂອງພວກເຂົາ ແລ້ວຍື່ນສເນີເຂົ້າໄປໃຫ້ທາງໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ອອກອະນຸຍາດໃຫ້. ຖ້າພວກນັກຮຽນຫາບ່ອນຮຽນເຮັດວຽກໄດ້ດ້ວຍຕົນເອງ ທາງໂຮງຮຽນ ຫຼື TAFE NSW ກໍຈະມີຄຳແນະນຳ ແລະ ຈົດໝາຍແນະນຳຕົວເອງກັບນາຍຈ້າງໃຫ້ແກ່ນັກຮຽນ.

### ນັກຮຽນຕ້ອງມີອາຍຸເທົ່າໃດຈຶ່ງເຂົ້າຮ່ວມໄດ້?

ນັກຮຽນທີ່ມີອາຍຸ14ປີ ແລະ ຫຼາຍກວ່ານັ້ນສາມາດເຂົ້າຮ່ວມໄດ້. ຖ້ານັກຮຽນມີອາຍຸຕ່ຳກວ່າ15ປີ ຈະມີຂໍ້ກຳນົດວ່າພວກເຂົາຈະສາມາດເຂົ້າຮ່ວມໄດ້ໃນຍາມໃດ.

### ຍາມໃດພວກນັກຮຽນຈຶ່ງຈະໄດ້ເຂົ້າຮຽນຢູ່ບ່ອນເຮັດວຽກ?

- ໂຮງຮຽນ ສະຖາບັນ TAFE NSW ຫຼື P/C RTO ຈະຕັດສິນໃຈວ່າ ໃນລະຍະປີນຶ່ງນັ້ນຈະຈັດ ໃຫ້ມີກິຈກັມການຮຽນຢູ່ບ່ອນເຮັດວຽກຂຶ້ນໃນຍາມໃດ ແລະ ນັກຮຽນຄົນໃດຈະໄດ້ເຂົ້າຮ່ວມ, ຕາມທັມມະດາແລ້ວ ຈະຕ້ອງມີການປະຊຸມປຶກສາຫາລືກັບກຸ່ມຊຸມຊົນຂອງພວກເຂົາເສັຍກ່ອນ. ພວກເຂົາຈະໃຫ້ຣາຍລະອຽດຂອງແຕ່ລະໂຄງການແກ່ທ່ານໃນຖານະທີ່ເປັນພໍ່ແມ່ຫຼືຜູ້ດູແລ.
- ພວກນັກຮຽນຖືກຄາດຫວັງໄວ້ວ່າ ຕ້ອງໄປບ່ອນເຮັດວຽກທຸກໆມື້ຂອງໂຄງການນີ້.
- ໃນຖານະທີ່ການຮຽນຢູ່ບ່ອນເຮັດວຽກເປັນສ່ວນນຶ່ງໃນຫຼັກສູດຂອງໂຮງຮຽນ ໂຄງການນີ້ຈະຖືກຈັດຂຶ້ນຢູ່ພາຍໃນເທີມຮຽນຂອງໂຮງຮຽນ ຫຼື ຂອງ TAFE NSW.
- ໂຄງການຮຽນຢູ່ບ່ອນເຮັດວຽກສຳລັບນັກຮຽນ ປີ9 ແລະ ປີ10 ຈະຖືກຈັດຂຶ້ນພາຍໃນເທີມຮຽນເທົ່ານັ້ນ.
- ພວກນັກຮຽນທີ່ມີອາຍຸຕ່ຳກວ່າ 15ປີ ຈະບໍ່ສາມາດເຮັດວຽກກ່ອນ 7ໂມງເຊົ້າ ແລະ ຫຼັງຈາກ 6ໂມງແລງ.
- ໃນສະຖານະການທີ່ຖືກຍົກເວັ້ນ ທ່ານຄູໃຫຍ່ (Principal) ອາດຈະອະນຸຍາດໃຫ້ນັກຮຽນປີ11 ແລະ ປີ12 ບາງຄົນ ໃຫ້ຮຽນເຮັດວຽກໃນລະຍະພັກໂຮງຮຽນໄດ້. ອັນນີ້ບໍ່ຮວມເຖິງ ມື້ພັກໃນຍາມຄຣິດສມາດ.
- ການຮຽນຢູ່ບ່ອນເຮັດວຽກອາດຈະຖືກຍືດອອກໄປຫາວັນສຸດສັປດາ ດ້ວຍການອະນຸຍາດພິເສດຈາກທ່ານຄູໃຫຍ່ ແຕ່ວ່າ ຖ້າການເຮັດວຽກໃນວັນສຸດສັປດານີ້ແມ່ນຂໍ້ກຳນົດອັນສຳຄັນ ຂອງອຸດສະຫະກັມນີ້ເທົ່ານັ້ນ.

## ພວກນັກຮຽນຈະຕ້ອງເດີນທາງໄກເທົ່າໃດ?

- ບ່ອນເຮັດວຽກສ່ວນຫຼາຍຈະຢູ່ໃນລະຫວ່າງລະຍະທາງທຽວຈາກເຮືອນ.
- ພວກນັກຮຽນອາດຈະໄດ້ຮັບອະນຸຍາດພິເສດສຳລັບບ່ອນເຮັດວຽກທີ່ມີບ່ອນພັກທີ່ໄກຈາກເຮືອນ. ການອະນຸຍາດພິເສດນີ້ຂຶ້ນຢູ່ກັບຫຼັກຖານທີ່ວ່າການຮຽນນີ້ຈະມີຄ່າແກ່ນັກຮຽນຢ່າງ ຫຼວງຫຼາຍ. ອີກຢ່າງນຶ່ງ ມັນຍັງຂຶ້ນຢູ່ກັບຄວາມພໍໃຈໃນການຈັດການເລື່ອງການຄວບຄຸມເບິ່ງການຮຽນເຮັດວຽກ ການເດີນທາງ ບ່ອນພັກອາສັຍ ແລະ ການຄວບຄຸມໃນເວລາກາງຄືນ.
- ໜ້ອຍທີ່ສຸດທີ່ຈະມີບ່ອນຮຽນເຮັດວຽກຢູ່ຕ່າງຣັຖ ນອກຈາກວ່າໂຮງຮຽນຈະຢູ່ໃກ້ເຂດຊາຍແດນລະຫວ່າງຣັຖ ຫຼື ຫາກວ່າອຸດສາຫະກັມນັ້ນບໍ່ມີຢູ່ໃນຣັຖ NSW. ຖ້າທ່ານຄິດຢາກໄດ້ບ່ອນຮຽນເຮັດວຽກຢູ່ຕ່າງຣັຖ ສິ່ງທຳອິດທີ່ຕ້ອງເຮັດກໍຄື ຕິດຕໍ່ທາງໂຮງຮຽນ ຫຼື ສະຖາບັນ TAFE NSW ທີ່ກ່ຽວຂ້ອງ.

## ເຣື່ອງການຈັດແຈງກ່ຽວກັບການເດີນທາງເດ?

- ພວກພໍ່ແມ່ ແລະ ຜູ້ດູແລ ຕ້ອງຊ່ວຍນັກຮຽນໃນການຈັດວາງແຜນການເດີນທາງຂອງພວກເຂົາດ້ວຍຄວາມລະມັດລະວັງ. ໂຮງຮຽນ ສະຖາບັນ TAFE NSW ຫຼື P/C RTO ກໍຕ້ອງຊ່ວຍອູ້ມຊູພວກນັກຮຽນໃນການວາງແຜນການເດີນທາງຂອງພວກເຂົາເຊັ່ນກັນ.
- **ໂທຣະສັບຫາ Transport InfoLine** ເບີ 131 500 ຫຼື ກວດເບິ່ງຕາມເວັປໄຊຕ໌ **www.131500.com** ເພື່ອເອົາຕາຕະລາງເວລາແລະຂໍ້ມູນອື່ນໆທີ່ກ່ຽວກັບການເດີນທາງ ສາທາຣະນະ.
- ໃນຖານະທີ່ເປັນພໍ່ແມ່ ແລະ ຜູ້ດູແລ ທ່ານຕ້ອງມີຄວາມພໍໃຈວ່າ ການຈັດແຈງເຣື່ອງເດີນທາງນີ້ລູກຂອງທ່ານສາມາດເບິ່ງແຍງຕົວເອງໄດ້ດ້ວຍຄວາມປອດພັຍ. ຖ້າທ່ານມີຄວາມກັງວົນໃຈ ໃດໆ ທ່ານຄວນໂອ້ລົມກັບຜູ້ຈັດໂຄງການນີ້ໂດຍກົງ.
- ນັກຮຽນຕ້ອງຈ່າຍຄ່າເດີນທາງທັງໝົດດ້ວຍຕົວເອງ. ທ່ານຖືກຄາດຫວັງວ່າໃຫ້ຊ່ວຍອູ້ມຊູໃນການໃຊ້ຈ່າຍຄ່າເດີນທາງຂອງລູກທ່ານໃນລະຍະທີ່ຢູ່ໃນໂຄງການຮຽນຢູ່ບ່ອນເຮັດວຽກນີ້.
- ຄ່າເດີນທາງເຄິ່ງຄ່າກໍມີໄວ້ໃຫ້ສຳລັບການເດີນທາງໂດຍທາງຣົດໄຟ ຣົດບັສ ແລະ ເຮືອ ສາທາຣະນະ. ການເດີນທາງເຄິ່ງຄ່ານີ້ບາງທີກໍອາດໃຊ້ໄດ້ກັບຣົດບັສເອກກະຊົນ.
- ຖ້າຕ້ອງການ, ທາງໂຮງຮຽນຂອງທ່ານກໍສາມາດຈັດໃຫ້ມີບັດປະຈຳຕົວທີ່ເປັນຫຼັກຖານອາຍຸໃຫ້ແກ່ນັກຮຽນໄດ້ຕາມຄຳຂໍ.

## ມີຄຳອະນຸຍາດໃດແດ່ທີ່ຕ້ອງການ?

- ໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO ຈະຂໍຄຳອະນຸຍາດ ຈາກທ່ານເພື່ອໃຫ້ນັກຮຽນຮັບເອົາກິຈກັມການຮຽນເຮັດວຽກແຕ່ລະອັນທີ່ຖືກສເນີມາ.
- ກິຈກັມຢູ່ບ່ອນເຮັດວຽກແຕ່ລະອັນຕ້ອງຖືກບັນທຶກຢູ່ໃນ ບັນທຶກການຮຽນເຮັດວຽກຂອງນັກຮຽນ (Student's Placement Record) ທີ່ເອົາໃຫ້ນັກຮຽນ.
- ບັນທຶກການຮຽນເຮັດວຽກຂອງນັກຮຽນ ຕ້ອງຖືກເຊັນຮັບໂດຍນັກຮຽນ, ນາຍຈ້າງ ແລະ ທ່ານເອງ ກ່ອນທີ່ທາງ ໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO ຈະໃຫ້ຄຳອະນຸຍາດອັນສຸດທ້າຍ. ໃນເມື່ອການຮຽນເຮັດວຽກຖືກອະນຸຍາດແລ້ວ ທ່ານກໍຈະໄດ້ຮັບສຳເນົາຂອງ ບັນທຶກການຮຽນເຮັດວຽກຂອງນັກຮຽນ ທີ່ສົມບູນສຳເນົານຶ່ງ. ກະຣຸນາ ເກັບໄວ້ເພື່ອຄວາມສະດວກໃນການໃຊ້ເປັນສິ່ງອ້າງອີງ.
- ບາງຄັ້ງ ນາຍຈ້າງທີ່ທ່ານເລືອກ ຫຼື ເວລາເຮັດວຽກທີ່ທ່ານຂໍສຳລັບລູກຊາຍ ຫຼື ລູກສາວຂອງທ່ານນັ້ນອາດຈະບໍ່ໄດ້ຕາມທີ່ຕ້ອງການ. ທ່ານຈະຕ້ອງໂອ້ລົມກັບທາງ ໂຮງຮຽນ ຫຼື ສະຖາບັນ TAFE NSW.
- ໂຮງຮຽນ ສະຖາບັນ TAFE NSW ຫຼື P/C RTO ຕ້ອງມີຄວາມພໍໃຈວ່າ ບ່ອນຮຽນເຮັດວຽກນັ້ນໃຫ້ຄວາມປອດພັຍ ແລະ ປະສົບການທີ່ເໝາະສົມສຳລັບນັກຮຽນ ແລະ ໜ້າທີ່ຮັບຜິດຊອບ ທີ່ພວກເຂົາມີກໍງ່າຍພໍທີ່ພວກເຂົາເຮັດໄດ້.
- ນາຍຈ້າງທີ່ເປັນເຈົ້າພາບຕ້ອງບົ່ງບອກຢູ່ໃນ ບັນທຶກການຮຽນເຮັດວຽກຂອງນັກຮຽນ ວ່າ ນັກຮຽນຈະໄດ້ຮັບຄວາມປອດພັຍຢ່າງໃດພາຍໃນລະຍະການຮຽນເຮັດວຽກນີ້.
- ເງື່ອນໄຂອັນນຶ່ງໃນການຮຽນເຮັດວຽກທີ່ໄດ້ຮັບອະນຸຍາດສຳລັບວິຊາ VET ແລະ ການຮຽນຢູ່ບ່ອນເຮັດວຽກອັນໃດອັນນຶ່ງທີ່ຢູ່ໃນອຸດສາຫະກັມກໍ່ສ້າງ ກໍຄື ພວກນັກຮຽນຕ້ອງ ຈົບວິຊາສະເພາະ ດ້ານ ການຝຶກຫັດເຣື່ອງຄວາມປອດພັຍແລະສຸຂພາບກ່ຽວກັບວຽກງານ (occupational health and safety training) ກ່ອນທີ່ຈະຮັບເອົາບ່ອນຮຽນເຮັດວຽກ. ເພື່ອເອົາຂໍ້ມູນເພີ້ມຕື່ມ ກະຣຸນາຕິດຕໍ່ທາງ ໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO.

## ລູກຂ້ອຍຈະໄດ້ຮັບເງິນຄ່າຈ້າງບໍ?

- ບໍ່. ພວກນັກຮຽນຖືກຖືວ່າເປັນ "ຄົນງານອາສາສມັກ" ດັ່ງນັ້ນຈະບໍ່ໄດ້ຮັບເງິນຄ່າຈ້າງ. ນາຍຈ້າງເຈົ້າພາບບໍ່ໄດ້ຖືກກຳນົດໃຫ້ຈ່າຍຄ່າຈ້າງໃດໆໃຫ້ແກ່ພວກເຂົາ ພາຍໃຕ້ກົດໝາຍຂອງ ຣັຖບານກາງ ຫຼື ຣັຖບານຣັດ ທີ່ຄຸ້ມຄອງອຸດສາຫະກັມນັ້ນໂດຍສະເພາະ ແລະ ພາຍໃຕ້ກົດໝາຍ ວ່າດ້ວຍ ການພັກປະຈຳປີຂອງຣັດ ນຊວ (NSW Annual Holidays Act) ຫຼື ກົດ ໝາຍ ວ່າດ້ວຍ ການໃຫ້ເງິນຄ່າທຳຂວັນຂອງຄົນງານ (Worker's Compensation Act).
- Department of Education and Training ມີປະກັນພັຍຄຸ້ມຄອງພວກນັກຮຽນທີ່ຢູ່ໃນໂຄງການຮຽນຢູ່ບ່ອນເຮັດວຽກ. ເຖິງຢ່າງໃດກໍດີ ປະກັນພັຍນີ້ຈະ **ໃຊ້ບໍ່ໄດ້** ສຳລັບນັກຮຽນທີ່ ໄດ້ຮັບເງິນຄ່າຈ້າງສຳລັບໂຄງການການຮຽນຢູ່ບ່ອນເຮັດວຽກ.

- ມີຂໍ້ຍົກເວັ້ນ **ນຶ່ງຂໍ້** ນັ້ນກໍຄື ຖ້າລູກຊາຍ ຫຼື ລູກສາວຂອງທ່ານເຮັດວຽກເຄິ່ງເວລາຢູ່ແລ້ວ ແລະ ໃຊ້ວຽກທີ່ຕົນເຮັດຢູ່ນັ້ນເປັນບ່ອນຮຽນເຮັດວຽກຕາມຂໍ້ບັງຄັບຂອງ HSC VET ໄປໃນໂຕເລີຍ
  - ການຕົກລົງແບບນີ້ຕ້ອງຖືກຕໍ່ລອງກັບນາຍຈ້າງ ແລະ ໄດ້ຮັບຄຳອະນຸຍາດຈາກທາງໂຮງ ຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO ອີກດ້ວຍ.
  - ໃນກໍຣະນີນີ້ ນັກຮຽນບໍ່ແມ່ນຄົນງານອາສາສມັກ ແລະ ການຈັດການເຣື່ອງປະກັນພັຍ ຂອງນາຍຈ້າງກໍຈະຄຸ້ມຄອງນັກຮຽນ.

### ເຣື່ອງໃບອະນຸຍາດ ແລະ ການອະນຸມັດ ເດ?

- ພວກນັກຮຽນບໍ່ຄວນເຮັດໜ້າທີ່ໃດໆທີ່ຕ້ອງມີການອະນຸມັດ ຫຼື ໃບອະນຸຍາດ ນອກຈາກວ່າພວກເຂົາໄດ້ມີໃບອະນຸຍາດອັນປັດຈຸບັນຢູ່ແລ້ວ ແລະ ກິຈກັມທີ່ເຮັດນັ້ນກ່ຽວພັນກັບຜົນຮັບຂອງການຮຽນຢູ່ບ່ອນເຮັດວຽກນີ້ໂດຍກົງ.
- ຣາຍລະອຽດຂອງກິຈກັມທີ່ຕ້ອງມີໃບອະນຸຍາດນັ້ນຕ້ອງຖືກຮວມໃສ່ຢູ່ໃນ ບັນທຶກການຮຽນເຮັດວຽກຂອງນັກຮຽນ (Student's Placement Record) ແລະ ຕົກລົງເຫັນດີພ້ອມກັນໝົດທຸກຝ່າຍ (ຮວມທັງ ພໍ່ແມ່ ແລະ ຜູ້ດູແລ) ກ່ອນທີ່ຈະຮັບເອົາການຮຽນຢູ່ບ່ອນເຮັດວຽກນີ້.

## ພາກ 3
## ຕ້ອງໃຫ້ນັກຮຽນປອດພັຍ

- ໃນທຸກໆເວລາ ຄວາມປອດພັຍຂອງນັກຮຽນ ແລະ ການຄຸ້ມຄອງເດັກ ເປັນຄວາມສຳຄັນອັນສູງສຸດຂອງ Department of Education and Training (ກະຊວງ). ອັນນີ້ຮວມເຖິງ ເວລາ ທີ່ພວກນັກຮຽນເຂົ້າຮ່ວມໃນໂຄງການ ການຮຽນຢູ່ບ່ອນເຮັດວຽກ.
- ການເວົ້າລົມ ທີ່ເຮັດໃຫ້ເກີດຜົນ ແລະ ແບບສມ່ຳສເມີກັບພໍ່ແມ່ແລະຜູ້ດູແລ ແລະ ກັບນາຍຈ້າງເຈົ້າພາບ ເປັນສິ່ງສຳຄັນຂອງໂຄງການ ການຮຽນຢູ່ບ່ອນເຮັດວຽກທຸກໆໂຄງການ.
- ທາງກະຊວງເອົາໜັງສື ຄຳແນະນຳເຣື່ອງ ການຮຽນຢູ່ບ່ອນເຮັດວຽກ ສຳລັບນາຍຈ້າງ *(An Employer's Guide to Workplace Learning)* ໃຫ້ແກ່ນາຍຈ້າງ ເພື່ອຊ່ວຍນາຍຈ້າງໃນການໃຫ້ຄວາມປອດພັຍແລະໂອກາດທີ່ເປັນຜົນດີສຳລັບພວກນັກຮຽນທີ່ຮຽນຢູ່ໃນບ່ອນເຮັດວຽກ. ໜັງສື ຄຳແນະນຳສຳລັບນາຍຈ້າງ ທີ່ລະອຽດນີ້ ໄດ້ຮວມເອົາຂໍ້ແນະນຳກ່ຽວກັບ ຊາວໜຸ່ມແລະເຣື່ອງຄວາມປອດພັຍ, ກິຈກັມທີ່ຕ້ອງຫ້າມ ແລະ ການແນະນຳນັກຮຽນໃຫ້ຮູ້ຈັກບ່ອນເຮັດວຽກທີ່ເປັນເຈົ້າພາບ.

  ໜັງສືຄຳແນະນຳນີ້ ຍັງບັນຈຸຂໍ້ມູນອັນສຳຄັນກ່ຽວກັບ ເຣື່ອງການຄຸ້ມຄອງເດັກ ໄວ້ນຳອີກດ້ວຍ. ພວກນາຍຈ້າງຕ້ອງໃຫ້ແນ່ໃຈວ່າພະນັກງານທຸກໆຄົນຮູ້ຈັກເຖິງຄວາມຮັບຜິດຊອບທີ່ກ່ຽວຂ້ອງ ກັບການເຮັດວຽກກັບນັກຮຽນ.
- ພະນັກງານຂອງກະຊວງຕ້ອງຣາຍງານຄວາມສົງໃສໃດໆກ່ຽວກັບວ່າ ເດັກ ຫຼື ຄົນໜຸ່ມຈະສ່ຽງຕໍ່ອັນຕຣາຍ. ພວກເຂົາຍັງຕ້ອງຣາຍງານເຣື່ອງຂໍ້ກ່າວຫານາຍຈ້າງ ຫຼື ຄົນງານ ກ່ຽວກັບເຣື່ອງ ການຄຸ້ມຄອງເດັກ.
- ຄວາມປະພຶດໃດໆທີ່ສໍ່ໄປໃນເຣື່ອງທາງເພດກ່ຽວກັບນັກຮຽນ ເປັນສິ່ງທີ່ຮັບບໍ່ໄດ້ ແລະ ຈະສົ່ງຜົນໄປເຖິງການດຳເນີນເຣື່ອງໃນທັນທີ. ນາຍຈ້າງ ຫຼື ພະນັກງານກະຊວງຄົນໃດຄົນນຶ່ງຕ້ອງແຈ້ງໃຫ້ທ່ານຄູໃຫຍ່ (Principal) ຫຼືຜູ້ຈັດການຂອງ TAFE NSW ທີ່ຮັບຜິດຊອບໃຫ້ຊາບ ເຖິງການກ່າວຫາຄົນງານຄົນໃດກໍຕາມໃນເຣື່ອງການຄຸ້ມຄອງເດັກ. ໃນເຣື່ອງນີ້ ຄຳວ່າ ຄົນງານ ຮວມໄປເຖິງນາຍຈ້າງນຳ.

  ທ່ານຄູໃຫຍ່ ຫຼື ຜູ້ຈັດການ ສະຖາບັນ TAFE ແຕ່ລະຄົນກໍຈະຖືກຂໍຮ້ອງໃຫ້ແຈ້ງໄປຫາ ພະແນກເບິ່ງແຍງ ການປະຕິບັດໜ້າທີ່ ແລະ ຄວາມປະພຶດຂອງຄົນງານ (Employee Performance and Conduct Unit) ຂອງກະຊວງ ຊຶ່ງສາມາດດຳເນີນການເຣື່ອງນີ້ຕໍ່ໄປອີກຖ້າເຫັນວ່າສົມຄວນ. ນອກຈາກນີ້ແລ້ວ, ການກ່າວຫາທີ່ໜັກໜາ ຈະຖືກແຈ້ງໄປຫາDepartment of Community Services ແລະ/ຫຼື NSW Police ຖ້າເຫັນວ່າສົມຄວນ.
- ຖ້າພວກນັກຮຽນວາງແຜນຮັບເຂົ້າຮຽນຢູ່ບ່ອນເຮັດວຽກທີ່ພົວພັນກັບເດັກນ້ອຍ ຕົວຢ່າງເຊັ່ນ ຢູ່ ໂຮງຮຽນ ສູນຮັບຝາກເດັກ ຫຼື ໂຮງໝໍ, ລູກຂອງທ່ານຕ້ອງຂຽນຟອຣົມ ການແຈ້ງວຽກທີ່ຕ້ອງຫ້າມ (Prohibited Employment Declaration) ເສັຍກ່ອນ. ອັນນີ້ແມ່ນໃຫ້ແນ່ໃຈວ່າ ມີແຕ່ຄົນທີ່ເໝາະສົມເທົ່ານັ້ນທີ່ຈະເຮັດວຽກກັບເດັກນ້ອຍໄດ້ ແລະ ອັນນີ້ກໍແມ່ນຂໍ້ກຳນົດທີ່ບັງຄັບ ພາຍໃຕ້ຂໍ້ແນະນຳຂອງ Commission for Children and Young People. ທາງໂຮງ ຮຽນ ຫຼື ສະຖາບັນ TAFE ຫຼື P/C RTO ຈະເອົາສຳເນົາຟອຣົມການແຈ້ງ ໃຫ້ແກ່ນັກຮຽນຜູ້ທີ່ ຕ້ອງການຂຽນຕື່ມ.

### ໃນຍາມສຸກເສີນເດ?

ເຖິງວ່າຈະໄດ້ມີການຈັດການເຣື່ອງການເບິ່ງແຍງຢູ່ໃນໂຄງການ ການຮຽນຢູ່ບ່ອນເຮັດວຽກ ແລະ ບ່ອນຮຽນເກືອບທຸກໆບ່ອນແລ້ວ ແລະດຳເນີນໄປໄດ້ດີໂດຍບໍ່ມີບັນຫາໃດໆກໍຕາມ, ກໍຍັງອາດຈະມີສະຖານະການທີ່ບໍ່ຄາດຝັນແລະທີ່ເກີດຂຶ້ນຍາກ ຊຶ່ງອາດເກີດຂຶ້ນໄດ້ເມື່ອມີການຜິດພາດບາງຢ່າງເກີດຂຶ້ນ.

ທາງກະຊວງ ມີບໍຣິການຕ່າງໆໄວ້ອູ້ມຊູພວກນັກຮຽນ ເພື່ອວ່າພວກເຂົາອາດມີກໍຣະນີສຸກເສີນ. ຂໍ້ກຳນົດຢ່າງນຶ່ງ ຄື ນັກຮຽນ **ມີການຕິດຕໍ່ສຳລັບຍາມສຸກເສີນ** ສຳລັບຊົ່ວໂມງຂອງການຮຽນເຮັດວຽກຂອງພວກເຂົາ ແລະ ອີກຢ່າງນຶ່ງກໍຄື ນັກຮຽນມີບັດນ້ອຍ ບັດວິທີດຳເນີນການເຣື່ອງຄວາມປອດພັຍແລະສຸກເສີນ - ການຕິດຕໍ່ຂອງນັກຮຽນ *(Safety and Emergency Procedures – Student Contact Card)* ຕິດຕົວໄວ້ຕລອດເວລາທີ່ຮຽນເຮັດວຽກ ເພື່ອບົ່ງບອກວ່າ ຕ້ອງຕິດຕໍ່ໃຜໃນຍາມ ສຸກເສີນ. ຕາມປົກກະຕິແລ້ວ ບັດນີ້ຈະມີຂນາດເທົ່າກັບບັດເຄຣດິດ ແລະ ສາມາດໃຊ້ໄດ້ໂດຍບໍ່ເປັນທີ່ສັງເກດຂອງໃຜ. ບັດນີ້ຍັງມີຄຳແນະນຳເຣື່ອງຄວາມປອດພັຍບາງຢ່າງຢູ່ນຳອີກ.

- *ວິທີດຳເນີນການເຣື່ອງຄວາມປອດພັຍແລະສຸກເສີນ - ບັດຕິດຕໍ່ຂອງນັກຮຽນ* ອັນນີ້ ແມ່ນທາງ ໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO ຂອງນັກຮຽນ ເປັນຜູ້ເອົາໃຫ້. ພວກນັກຮຽນຂຽນຣາຍລະອຽດຂອງການຕິດຕໍ່ໃນຍາມສຸກເສີນໃສ່ໃນບັດນີ້ ໂດຍຢູ່ພາຍໃຕ້ການຄວບຄຸມ

ແລະ ເອົາມາຈາກຂໍ້ມູນທີ່ນັກຮຽນເຄີຍຂຽນໃສ່ໄວ້ໃນ ບັນທຶກການຮຽນເຮັດວຽກຂອງນັກຮຽນ (Student Placement Record). ບັດນີ້ ຈະມີແຕ່ນັກຮຽນເທົ່ານັ້ນທີ່ໃຊ້ໄດ້ - ແລະ ໃຊ້ໃນຍາມສຸກເສີນເທົ່ານັ້ນ.

- ພາຍໃນ **ເວລາເຮັດວຽກທັມມະດາ** ຖ້າລູກທ່ານມີຄວາມເຊື່ອຢ່າງແທ້ຈິງວ່າ ພວກເຂົາສ່ຽງຕໍ່ອັນຕຣາຍ ແຕ່ບໍ່ມີຄວາມໝັ້ນໃຈພໍທີ່ຈະນໍາເອົາເຣື່ອງນີ້ໄປແຈ້ງນາຍຈ້າງ ຫຼື ຜູ້ຄວບຄຸມການຮຽນຢູ່ບ່ອນເຮັດການ ໃຫ້ຊາບໄດ້, ນັກຮຽນຄວນໂທຣະສັບໄປຫາ **ຜູ້ທີ່ຖືກແຕ່ງຕັ້ງສໍາລັບການຕິດຕໍ່** ທີ່ເອົາໃຫ້ໂດຍທາງໂຮງຮຽນ ຫຼື ຖ້າເໝາະສົມ, ໂດຍສະຖາບັນ TAFE NSW ຫຼື P/C RTO ແລະ ຕາມທີ່ມີຢູ່ໃນບັດຕິດຕໍ່ຂອງນັກຮຽນ ຂອງພວກເຂົາເອງ. ຖ້າວ່າພວກເຂົາໄດ້ຮັບບາດເຈັບຮ້າຍແຮງ ພວກເຂົາກໍຄວນຕິດຕໍ່ທ່ານອີກນໍາ. ເບີໂທຣະສັບສໍາລັບການຕິດຕໍ່ຂອງທ່ານ ກໍຈະຖືກບັນທຶກໄວ້ຢູ່ໃນບັດນໍາ.
- ຖ້າຫາກວ່າບໍ່ມີນາຍຄູທີ່ເໝາະສົມ ທີ່ຈະອາສາສມັກເປັນຜູ້ຕິດຕໍ່ໃນຍາມສຸກເສີນ ຊຶ່ງຮວມທັງ ລະຍະເວລາໃນລະຫວ່າງຊົ່ວໂມງສອນໃນຫ້ອງຮຽນພົດລົງ ແລະ ຫຼັງໂມງເຮັດວຽກທັມມະດາ ກໍຈະບໍ່ອະນຸຍາດໃຫ້ນັກຮຽນເຂົ້າຮຽນຢູ່ບ່ອນເຮັດວຽກໃນຊ່ວງລະຍະເວລາທີ່ບໍ່ມີນາຍຄູນັ້ນ.
- ໃນກໍຣະນີທີ່ໜ້ອຍທີ່ສຸດ, ຕາມທັມມະດາແລ້ວ ຢູ່ໃນປີ11 ແລະ ປີ12 ນັ້ນ ການຈັດເຂົ້າຮຽນຢູ່ບ່ອນເຮັດວຽກອາດຈະຍືດອອກໄປເຖິງ **ນອກຊົ່ວໂມງເຮັດວຽກທັມມະດາ.** ອັນນີ້ທາງໂຮງ ຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO ໄດ້ບົ່ງບອກໄວ້ຢູ່ໃນ ບັນທຶກການຮຽນເຮັດວຽກຂອງນັກຮຽນ. ຖ້ານັກຮຽນເຊື່ອວ່າພວກເຂົາມີຄວາມສ່ຽງຕໍ່ອັນຕຣາຍໃນ ລະຍະ ນອກຊົ່ວໂມງເຮັດວຽກທັມມະດາ, ພວກເຂົາຕ້ອງຕິດຕໍ່ທ່ານ ຊຶ່ງເປັນ**ພໍ່ແມ່ ຫຼື ຜູ້ດູແລ** ຂອງພວກເຂົາ. ທ່ານ **ບໍ່** ໄດ້ຖືກຂໍໃຫ້ສືບສວນ ຫຼື ແກ້ໄຂບັນຫາໃດໆ: ພຽງແຕ່ເອົາລູກຊາຍ ຫຼື ລູກສາວຂອງທ່ານອອກຈາກສະພາບທີ່ສ່ຽງຕໍ່ອັນຕຣາຍເທົ່ານັ້ນ. ມັນເປັນຄວາມຮັບຜິດຊອບຂອງ ໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO ທີ່ຈະຕິດຕາມເບິ່ງບັນຫາຢູ່ໃນບ່ອນເຮັດວຽກໃຫ້ໄວເທົ່າທີ່ຈະໄວໄດ້ຫຼັງຈາກທີ່ທ່ານໄດ້ແຈ້ງມາ. ພວກເຂົາຈະແຈ້ງໃຫ້ທ່ານຊາບເຖິງຜົນທີ່ອອກມາ.
- ສໍາລັບລະຍະເວລາ **ນອກຊົ່ວໂມງເຮັດວຽກທັມມະດາ** ເທົ່ານັ້ນ ທີ່ທ່ານອາດຢາກແຕ່ງຕັ້ງຜູ້ໃຫຍ່ທີ່ມີຄວາມຮັບຜິດຊອບທີ່ນັກຮຽນເຊື່ອໃຈອີກຄົນນຶ່ງ ໃຫ້ເປັນຜູ້ຕິດຕໍ່ຂອງພວກເຂົາແທນທ່ານ. ຣາຍລະອຽດຂອງຄົນຜູ້ນັ້ນຕ້ອງມີໄວ້ໃຫ້ຢູ່ໃນ ບັນທຶກ ການຮຽນເຮັດວຽກຂອງນັກຮຽນ ຊຶ່ງພວກເຂົາຕ້ອງເຊັນຊື່. ຜູ້ຕິດຕໍ່ທີ່ແຕ່ງຕັ້ງດັ່ງກ່າວນີ້ ຕ້ອງບໍ່ແມ່ນນາຍຈ້າງເຈົ້າພາບ ຫຼື ຄົນງານຄົນອື່ນໆຂອງພວກເຂົາ ຫຼື ແຟນຊາຍ ຫຼື ແຟນຍິງ ຂອງນັກຮຽນ.
- **ທ່ານ ຫຼື ຜູ້ຕິດຕໍ່ທີ່ທ່ານແຕ່ງຕັ້ງ** ຕ້ອງແຈ້ງເຫດສຸກເສີນໃດໆທີ່ພົວພັນກັບນັກຮຽນໃນລະຍະການຮຽນເຮັດວຽກນອກຊົ່ວໂມງເຮັດວຽກທັມມະດາ ໃຫ້ໂຮງຮຽນຂອງນັກຮຽນ ຫຼື ຖ້າເໝາະສົມ, ໃຫ້ທາງ ສະຖາບັນ TAFE NSW ຫຼື P/C RTO ໃຫ້ຊາບ. ການແຈ້ງນີ້ ຕ້ອງໃຫ້ໄວທີ່ເທົ່າທີ່ຈະໄວໄດ້ຫຼັງຈາກທີ່ມີເຣື່ອງເກີດຂຶ້ນ, ຕົວຢ່າງເຊັ່ນໃຫ້ໄວເທົ່າທີ່ຈະໄວໄດ້ໃນມື້ຕໍ່ມາ. ທາງໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO ຈະຈັດການກັບເຣື່ອງນີ້ ແລະ ຈະເຮັດໃນທາງທີ່ເຫັນສົມຄວນ.
- ກ່ອນທີ່ຈະມີຄໍາອະນຸຍາດອັນສຸດທ້າຍຈາກໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO, ມັນເປັນສິ່ງສໍາຄັນທີ່ທ່ານຕ້ອງເອົາຣາຍລະອຽດການຕິດຕໍ່ ແລະ **ນໍາເບີ Medicare** ໃສ່ຢູ່ພາກ ຂອງພໍ່ແມ່/ຜູ້ດູແລ ທີ່ຢູ່ໃນ ບັນທຶກການຮຽນເຮັດວຽກຂອງນັກຮຽນ ເສັຍກ່ອນ. ນໍາເບີ Medicare ແມ່ນສໍາລັບເວລາທີ່ຕ້ອງການນາຍໝໍໃນຊ່ວງລະຍະການເຂົ້າຮຽນເຮັດວຽກ. ນັກຮຽນທີ່ຍັງບໍ່ມີສິດມີນໍາເບີ Medicare ອາດບັນທຶກຣາຍລະອຽດການຕິດຕໍ່ຂອງນາຍໝໍ (GP) ຂອງພວກເຂົາໄວ້. ເຮົາຂໍຂອບໃຈເປັນຢ່າງສູງໃນການຮ່ວມມືຂອງທ່ານ.
- ນັກຮຽນຍັງຕ້ອງບັນທຶກ ນໍາເບີ Medicare ໄວ້ຢູ່ໃນ ບັດວິທີດໍາເນີນການເຣື່ອງຄວາມປອດພັຍແລະສຸກເສີນ - ການຕິດຕໍ່ຂອງນັກຮຽນ ອີກນໍາ.
- ຖ້າທ່ານມີຄໍາຖາມໃດໆກ່ຽວກັບການຈັດແຈງເຣື່ອງການເຂົ້າຮຽນຢູ່ບ່ອນເຮັດວຽກ ຂອງລູກທ່ານ ກະຣຸນາຕິດຕໍ່ທາງໂຮງຮຽນ ຫຼື ທາງສະຖາບັນ TAFE NSW. ອັນນີ້ແມ່ນຮວມທັງການຂໍບ່ອນຮຽນຂອງນັກຮຽນຢູ່ ປີ8 - ປີ10 ຊຶ່ງອາດຍືດອອກໄປເຖິງ ນອກຊົ່ວໂມງເຮັດວຽກທັມມະດາ.

## ພາກ 4
## ຂໍ້ກໍານົດ ຂອງ ການປະກັນພັຍ ແລະ ເງິນຄ່າເສັຍຫາຍ

ທາງກະຊວງມີຂໍ້ກໍານົດຫຼາຍຂໍ້ສໍາລັບການຄຸ້ມຄອງພວກນັກຮຽນ ແລະ ພວກຄົນງານ ຮວມມີ:

- ການຈັດຫາ ການປະກັນພັຍສໍາລັບພວກນັກຮຽນທີ່ໄດ້ຮັບບາດເຈັບໃນລະຍະຮຽນຢູ່ບ່ອນເຮັດວຽກ. ບັນດາພໍ່ແມ່ແລະຜູ້ດູແລຈະຕ້ອງຮຽກຮ້ອງເອົາຈາກ Medicare ແລະ ບໍຣິສັດປະກັນພັຍສຸຂພາບເອກກະຊົນເສັຍກ່ອນ ກ່ອນທີ່ຈະເຮັດໃບຄໍາຮ້ອງໄປຫາກະຊວງເພື່ອເອົາຄ່າໃຊ້ຈ່າຍທີ່ຍັງຄ້າງຄາຢູ່.
- ການຄຸ້ມຄອງສໍາລັບພວກນາຍຈ້າງ ໃນເຣື່ອງທີ່ມີການຟ້ອງຮ້ອງຕໍ່ພວກເຂົາຊຶ່ງເນື່ອງມາຈາກເກີດ ການບາດເຈັບຕໍ່ນັກຮຽນ ຫຼື ຈາກການຮຽກຮ້ອງເອົາຄ່າເສັຍຫາຍ ເນື່ອງມາຈາກການເກີດຄວາມເສັຍຫາຍຕໍ່ຊັບສິນ ຊຶ່ງເປັນການກະທໍາຂອງນັກຮຽນທີ່ຢູ່ໃນໂຄງການ ການຮຽນຢູ່ບ່ອນ ເຮັດວຽກ. ມີເງື່ອນໄຂຕ່າງໆໃນການຟ້ອງຮ້ອງນີ້.

ຖ້າວ່າ ນັກຮຽນຄົນໃດຄົນນຶ່ງໄດ້ຮັບບາດເຈັບຮ້າຍແຮງ ເນື່ອງມາຈາກການເຂົ້າຮ່ວມໃນໂຄງການຮຽນຢູ່ບ່ອນເຮັດວຽກ, ທາງກະຊວງຈະຕ້ອງໃຫ້ການຮັບຮອງວ່າ ນັກຮຽນຈະບໍ່ເສັຍປຽບໄປກວ່າຜູ້ໃດຜູ້ນຶ່ງທີ່ເຮັດວຽກແບບໄດ້ເງິນຄ່າຈ້າງ ແລະ ທີ່ໄດ້ຮັບບາດເຈັບແບບດຽວກັນ ແລະ ທີ່ໄດ້ຖືກຄຸ້ມຄອງໂດຍ ກົດໝາຍເງິນຄ່າທໍາຂວັນຄົນງານ (Workers' Compensation Act). ດ້ວຍເຫດຜົນນັ້ນ, ທາງກະຊວງຈຶ່ງໃຊ້ ກົດໝາຍເງິນຄ່າທໍາຂວັນຄົນງານ ຣັຖນຊວ (NSW Workers' Compensation Act) ເປັນ

ພື້ນຖານເພື່ອທົດແທນນັກຮຽນ ໃນການຈ່າຍຄ່າ ຢາຮັກສາ ແລະ ຄ່າການບໍາບັດຕ່າງໆ. ເນື່ອງຈາກວ່າ ພວກນັກຮຽນບໍ່ໄດ້ຮັບເງິນຄ່າຈ້າງ ເງິນຄ່າທໍາຂວັນນີ້ຈຶ່ງບໍ່ໄດ້ຮວມເອົາການສູນເສັຍຣາຍໄດ້ເຂົ້ານໍາ. ເຊັ່ນດຽວກັນກັບຄົນງານທີ່ໄດ້ຄ່າຈ້າງ ນັກຮຽນມີສິດພາຍໃຕ້ກົດໝາຍສາມັນ ທີ່ຈະຮຽກຮ້ອງເອົາຄ່າທໍາຂວັນ ຖ້າວ່າສາມາດອ້າງຫຼັກຖານໄດ້ວ່າ ການບາດເຈັບນີ້ ເກີດມາຈາກຄວາມບໍ່ເອົາໃຈໃສ່ຂອງນາຍຈ້າງເຈົ້າພາບ ຂອງກະຊວງ ຫຼື ຂອງບຸກຄົນທີສາມ.

ຂໍ້ກໍານົດປະກັນພັຍເຫຼົ່ານີ້ໃຊ້ໄດ້ແຕ່ກັບໂຄງການ ການຮຽນຢູ່ບ່ອນເຮັດວຽກທີ່ໄດ້ຮັບອະນຸຍາດຈາກທາງໂຮງຮຽນ ຫຼື ຖ້າເປັນໄປໄດ້ ໂດຍສະຖາບັນ TAFE NSW ຫຼື ໂດຍ P/C RTO ສໍາລັບ ບ່ອນຮຽນຢູ່ທາງນອກເທົ່ານັ້ນ. ການອະນຸຍາດນີ້ ໄດ້ຖືກບັນທຶກໄວ້ຢູ່ໃນ ປຶ້ມບັນທຶກ ການຮຽນ ຂອງນັກຮຽນ (Student Placement Record).

ອົງການ P/C RTO ຈະເອົາຣາຍລະອຽດກ່ຽວກັບການແຈ້ງເຣື່ອງການປະກັນພັຍສຳລັບພວກນັກຮຽນທີ່ມາຮຽນເຮັດວຽກ ໃຫ້ພາຍໃນອົງການຂອງເຂົາຮູ້. ເຖິງຢ່າງໃດກໍດີ, ໂຮງຮຽນຂອງລູກຊາຍ ຫຼື ລູກສາວທ່ານ ຈະສືບຕໍ່ໜ້າທີ່ການດູແລໃນລະຍະທີ່ເຂົາເຂົ້າຮ່ວມໂຄງການທີ່ຈັດໂດຍທາງ ເອກກະຊົນ ຫຼື ຊຸມຊົນ RTO (P/C RTO) ທີ່ໄດ້ຖືກເໝົາໃຫ້ເປັນຜູ້ດຳເນີນການຮຽນນີ້ໃຫ້ແກ່ນັກ ຮຽນ. ພວກເຂົາຈະຕິດຕໍ່ກັບ P/C RTOs ຢ່າງສມ່ຳສເມີເພື່ອຈັດໂຄງການເຂົ້າຮຽນວຽກສຳລັບນັກຮຽນຂອງເຂົາ.

## ພາກ 5
## ວິທີທີ່ດີທີ່ສຸດໃນການຊ່ວຍລູກທ່ານ

**ກ່ອນທີ່ຈະຈັດຫາບ່ອນຮຽນ** ຈົ່ງອ່ານເບິ່ງຂໍ້ມູນກ່ຽວກັບ ການຮຽນຢູ່ບ່ອນເຮັດວຽກ ທີ່ຜູ້ຈັດໂຄງການໄດ້ເອົາໃຫ້ ແລະ ໄປຮ່ວມການປະຊຸມໃຫ້ຂໍ້ມູນທີ່ກ່ຽວພັນກັບເຣື່ອງນີ້. ຖ້າທ່ານບໍ່ແນ່ໃຈກ່ຽວກັບ ເຣື່ອງໃດໆກໍຕາມ, ກະຣຸນາ ຂໍໃຫ້ເຂົາເຈົ້າອະທິບາຍເພີ້ມຕື່ມ.

**ຊຸກຍູ້ ລູກຊາຍ ຫຼື ລູກສາວທ່ານໃຫ້**:

- ໂອ້ລົມ ເຣື່ອງຄວາມສົນໃຈໃນການວາງແປນໜ້າທີ່ວຽກງານຂອງພວກເຂົາ ແລະ ວຽກທີ່ພວກເຂົາຢາກເຮັດ
- ຄົ້ນຄວ້າເບິ່ງອຸດສາຫະກັມທີ່ເຂົາຢາກເຮັດ ແລະ ໜ້າທີ່ວຽກງານທີ່ກ່ຽວຂ້ອງ ຕົວຢ່າງເຊັ່ນ - ເປີດເບິ່ງເວັບໄຊຕ໌ ຂອງ ບໍຣິການຂໍ້ມູນກ່ຽວກັບວຽກງານຂອງອົສເຕຣເລັຍ **www.myfuture.edu.au**
- ຂຽນຕື່ມໃບ Workplace Learning Research ທີ່ຢູ່ໃນ ປື້ມບັນທຶກຄວາມຊຳນານກ່ຽວກັບວຽກ *(Employment Related Skills Logbook)* ຂອງພວກເຂົາ ສອງໃບ.-
- ໂອ້ລົມກັນວ່າ ພວກເຂົາວາງແຜນຈະຮຽນຫຍັງແດ່ຈາກການເຂົ້າຮຽນເຮັດວຽກ ແລະ ຄຳຖາມທີ່ພວກເຂົາອາດຢາກຖາມຜູ້ຄວບຄຸມ ຫຼື ນາຍຈ້າງ.
- ຊອກຮູ້ວ່າ ມີຫຍັງອີກແດ່ ທີ່ນັກຮຽນຕ້ອງເຮັດເພື່ອກຽມຕົວສຳລັບເຂົ້າຮຽນເຮັດວຽກ. ຕົວຢ່າງ ເຊັ່ນ ເຮັດກິຈກັມກ່ອນເຂົ້າຮຽນ ຊຶ່ງຈັດໂດຍທາງໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO.

**ໃນຖານະພໍ່ແມ່ ຫຼື ຜູ້ດູແລ ທ່ານຍັງສາມາດຊ່ວຍໄດ້ ດ້ວຍການ**:

- ແຈ້ງໃຫ້ທາງໂຮງຮຽນຊາບເຖິງບ່ອນເຂົ້າຮຽນເຮັດວຽກໃດໆທີ່ທ່ານຮູ້ ຫຼື ທີ່ອາດມີໃຫ້.
- ແຈ້ງໃຫ້ທາງໂຮງຮຽນ ຫຼື ຖ້າເໝາະສົມ, ສະຖາບັນ TAFE NSW ຫຼື P/C RTO ເຖິງຄວາມ ພິການ, ສຸຂພາບ, ຢາຮັກສາໂຣກ, ອາການແພ້ ຫຼື ຂໍ້ຫ້າມຕ່າງໆ ທີ່ນັກຮຽນມີ ທີ່ຄວນນຳມາພິຈາຣະນາ ໂດຍສະເພາະ ຖ້າຫາກວ່າສິ່ງນີ້ອາດຈະກະທົບກະເທືອນຕໍ່ຄວາມປອດພັຍ ແລະ ການຄວບຄຸມນັກຮຽນຢູ່ໃນບ່ອນເຮັດວຽກ.
  ມີບ່ອນວ່າງສຳລັບທ່ານໃຫ້ຂໍ້ມູນເຫຼົ່ານີ້ຢູ່ໃນ ປື້ມບັນທຶກ ການຮຽນ ຂອງນັກຮຽນ ຫຼື ທ່ານອາດ ເອົາຂໍ້ມູນນີ້ຄັດໃສ່ກັບບັນທຶກກໍໄດ້. **ຖ້າຫາກລູກທ່ານຕ້ອງການການປ່ຽນແປງໃດໆຢູ່ບ່ອນເຮັດວຽກ ເພື່ອໃຫ້ເຂົ້າກັບຄວາມຕ້ອງການພິເສດຂອງພວກເຂົາ ທ່ານກໍຄວນຕິດຕໍ່ໂຮງຮຽນ ຫຼື ສະຖາບັນ** TAFE NSW **ອີກນຳ**.

**ໃນເມື່ອບ່ອນຮຽນໄດ້ຖືກຮັບຮອງແລ້ວ ຈົ່ງຊ່ວຍລູກຊາຍ ຫຼື ລູກສາວທ່ານຊອກຮູ້ກ່ຽວກັບ**:

- ຈັດວາງຕາຕະລາງຂອງກິຈກັມອື່ນໆໃໝ່ ເພື່ອໃຫ້ປຸຣິມະສິດຕໍ່ການຮຽນຢູ່ບ່ອນເຮັດວຽກຂອງພວກເຂົາ.
- ເຄື່ອງນຸ່ງ ແລະ ສິ່ງທີ່ຕ້ອງການຢ່າງອື່ນເພື່ອເຂົ້າຮຽນເຮັດວຽກ ຕົວຢ່າງເຊັ່ນ - ເກີບແບບຫຸ້ມຕີນ.
- ເວລາເລີ້ມ ແລະ ເວລາເລີກ (ພວກນັກຮຽນຖືກຄາດວ່າໃຫ້ເຮັດວຽກຕາມເວລາທັມມະດາຂອງໜ້າທີ່ນັ້ນ ແຕ່ວ່າ ບໍ່ແມ່ນກ່ອນ 7ໂມງເຊົ້າ ຫຼື ຫຼັງ 6ໂມງແລງ ຖ້າລູກທ່ານມີອາຍຸຕ່ຳກວ່າ15ປີ)
- ນັກຮຽນຕ້ອງການຮູ້ຫຍັງແດ່ສຳລັບມື້ທຳອິດ (ການຈັດແຈງເຣື່ອງເດີນທາງ, ເວລາທີ່ຕ້ອງມາຮອດ ຄົນທີ່ຕ້ອງຕິດຕໍ່)
- ມີຄວາມສະດວກຫຍັງແດ່ໃນການກິນອາຫານຢູ່ບ່ອນເຮັດວຽກ ຫຼືວ່າ ພວກເຂົາຕ້ອງເອົາອາຫານຕິດຕົວໄປນຳ.

**ໃນລະຍະເວລາເຂົ້າຮຽນເຮັດວຽກຢູ່ນັ້ນ ຊຸກຍູ້ໃຫ້ລູກທ່ານ ໃຫ້**:

- ເຮັດວຽກທີ່ຈັດໄວ້ໃຫ້ ໃຫ້ແລ້ວ ຫຼື ຮຽນເບິ່ງບັນທຶກຣາຍວັນ
- ເວົ້າກັບຜູ້ທີ່ຖືກແຕ່ງຕັ້ງໃຫ້ເປັນຜູ້ຕິດຕໍ່ໃນທັນທີທີ່ມີບັນຫາໃດໆ ຍົກຕົວຢ່າງເຊັ່ນ ບັນຫາຄວາມປອດພັຍ, ອຸບັດຕິເຫດ, ບາດເຈັບ, ການໂຕ້ຖຽງເຣື່ອງວຽກງານ, ການກວນໃຈ ຫຼື ການຂົ່ມເຫັງ.

**ຊຸກຍູ້ ລູກຊາຍ ຫຼື ລູກສາວທ່ານໃຫ້ ໂອ້ລົມກັບທ່ານ ໃນເຣື່ອງວ່າ**:

- ບໍຣິສັດເຈົ້າພາບ ເຮັດວຽກແບບໃດ, ຕາມຄວາມຄິດຂອງພວກເຂົາ
- ຂໍ້ກຳນົດຂອງການຮຽນ ແລະ ການຝຶກຫັດທີ່ກ່ຽວກັບວຽກ ຊນິດຕ່າງໆວ່າ ມີຫຍັງແດ່
- ເງື່ອນໄຂການເຮັດວຽກມີຫຍັງແດ່ ແລະ ໜ້າທີ່ຂອງສະຫະພັນກັມມະກອນ
- ຄວາມປອດພັຍແລະສຸຂພາບກ່ຽວກັບວຽກງານ [occupational health and safety (OH&S)] ຢູ່ບ່ອນເຮັດວຽກ
- ຄວາມຮັບຜິດຊອບ ແລະ ສິດທິ ຂອງຄົນງານ ຢູ່ບ່ອນເຮັດວຽກ ມີຫຍັງແດ່
- ລູກຊາຍ ຫຼື ລູກສາວທ່ານໄດ້ຮຽນຮູ້ຫຍັງແດ່ກ່ຽວກັບ ຄວາມເຂັ້ມແຂງ ຄຸນສົມບັດ ແລະ ຄວາມມັກທີ່ຈະເຮັດວຽກຢູ່ຝ່າຍນີ້ໃນອະນາຄົດ

**ໃນທັນທີຫຼັງຈາກການຮຽນຢູ່ບ່ອນເຮັດວຽກ ເວົ້າກັບລູກຊາຍ ຫຼື ລູກສາວທ່ານ ກ່ຽວກັບ:**

- ໂອ້ລົມກັບທ່ານ ແລະ ກັບນາຍຄູທີ່ກ່ຽວຂ້ອງ ເຣື່ອງການຣາຍງານຂອງນາຍຈ້າງ
- ຂຽນຕື່ມຣາຍການຢູ່ໃນ ປື້ມບັນທຶກຄວາມຊຳນານກ່ຽວກັບວຽກ *(Employment Related Skills Logbook)* ຂອງພວກເຂົາ
- ທົບທວນເບິ່ງແຜນໜ້າທີ່ວຽກງານ ແລະ ວຽກເຮັດໃນອະນາຄົດ ການສຶກສາ ການຝຶກຫັດ ແລະ ທາງເລືອກເອົາວຽກ ຂອງລູກທ່ານ
- ສະສົມ ແລະ ເກັບຮັກສາ ການຕິດຕໍ່ຈາກບ່ອນນີ້ແລະບ່ອນອື່ນໆເພື່ອຂໍຄຳແນະນຳ ຄວາມຊ່ວຍເຫຼືອ ແລະ ໂອກາດໃນອະນາຄົດ. ຂໍ້ມູນອັນນີ້ຄວນຖືກບັນທຶກໄວ້ເພື່ອເປັນສິ່ງອ້າງອີງໃນອະນາຄົດ.

## ພາກ 6
## ບ່ອນຕິດຕໍ່ທີ່ສຳຄັນ

ຂໍຂອບໃຈທີ່ທ່ານໄດ້ສລະເວລາອ່ານຂໍ້ມູນອັນສຳຄັນໃນ *ປື້ມຄຳແນະນຳ* ນີ້. ພວກເຮົາຫວັງວ່າທ່ານຈະມີຄວາມຮູ້ສຶກໝັ້ນໃຈ ແລະ ກຽມພ້ອມເປັນຢ່າງດີທີ່ຈະອູ້ມຊູລູກຂອງທ່ານໃນເວລາທີ່ພວກເຂົາຮັບເອົາໂອກາດທີ່ມີຄ່າໃນເຂົ້າຮຽນເຮັດວຽກ ຊຶ່ງຈັດໃຫ້ໂດຍທາງໂຮງຮຽນ ຫຼື ສະຖາບັນ TAFE NSW.

ຖ້າທ່ານມີຄຳຖາມໃດໆ ກະຣຸນາຕິດຕໍ່ກັບນຶ່ງໃນບ່ອນຕິດຕໍ່ທີ່ຢູ່ຂ້າງລຸ່ມນີ້:

- ຜູ້ປະສານງານ ໂຄງການ ການຮຽນຢູ່ບ່ອນເຮັດວຽກ (workplace learning program coordinator) ຢູ່ຕາມໂຮງຮຽນຂອງທ່ານ, ສະຖາບັນ TAFE NSW ຫຼື P/C RTO. ອັນນີ້ ອາດຈະແມ່ນຜູ້ໃຫ້ຄຳແນະນຳເຣື່ອງວຽກ, ຜູ້ປະສານງານ ຂອງ VET ຫຼື ຜູ້ປະສານງານ ຂອງ ໂຄງການ ຈາກໂຮງຮຽນເຖິງວຽກ (School to Work coordinator)
- ຜູ້ໃຫ້ຄຳປຶກສາ ດ້ານ ການສຶກສາວິຊາຊີບ ຢູ່ຕາມຫ້ອງການເຂດທີ່ກ່ຽວຂ້ອງ ຂອງ NSW Department of Education and Training.
- ຜູ້ໃຫ້ຄຳປຶກສາ ຂອງສະຖາບັນ TAFE NSW - –TVET ຢູ່ຕາມສະຖາບັນ TAFE NSW ທີ່ກ່ຽວຂ້ອງ.
- ຫົວໜ້າຜູ້ໃຫ້ຄຳປຶກສາ ໂຄງການ ການຮຽນຢູ່ບ່ອນເຮັດວຽກ (Senior Coordinator Workplace Learning), Vocational Education in Schools Directorate ຕາມເບີໂທຣະສັບ ເລກ 02 9244 5071.

**ນາຍຈ້າງເຈົ້າພາບ ຂອງ ນັກຮຽນ:**
(ຕ້ອງຂຽນຕື່ມໃນຕອນຮຽນເຮັດວຽກ)

| | |
|---|---|
| Host business: | |
| Contact person: | |
| Telephone: | |
| Mobile: | |
| Address: | |

NEW SOUTH WALES
DEPARTMENT
OF EDUCATION
AND TRAINING

© NSW Department of Education and Training (Vocational Education in Schools Directorate) November 2005

Al rights reserved. Except under conditions described in the Copyright Act 1968 and subsequent amendments, no part of this publication may be reproduced by any process without permission in writing from the publisher.

This document may be photocopied to support students from NSW government schools or students enrolled in TAFE NSW institutes.

ISBN 0731384458  SCIS 1241375

POINT5590